# 4.4.1. ໂຄງສ້າງ ແລະ ຄວາມຮັບຜິດຊອບ

## ໂຄງສ້າງຂອງການຈັດຕັ້ງ ແລະ ຄວາມຮັບຜິດຊອບ

ໂຄງຮ່າງການຈັດຕັ້ງໄດ້ສະແດງໃຫ້ເຫັນເຖິງລຳດັບຂັ້ນການປົກຄອງ ແລະ ຄວາມສຳພັນຂອງການລາຍງານລະຫວ່າງໜ້າທີ່ ແລະ ລະດັບຕ່າງໆໃນອົງການຈັດຕັ້ງ. ໜ້າວຽກຂອງແຕ່ລະ ລະດັບຄວາມຮັບຜິດຊອບ ແລະ ຂົງເຂດຄວາມຮັບຜິດຊອບສາມາດສະຫຼຸບຢູ່ໃນແຜນພາບການຈັດຕັ້ງລະອຽດ.

*ນິຍາມ*

### ໜ້າທີ່ ແລະ ຂົງເຂດໜ້າທີ່

**ພະແນກຫຼືຂົງເຂດຮັບຜິດຊອບ.**

ຕົວຢ່າງ: ການເງິນ, ສິ່ງແວດລ້ອມ, ການຕະຫຼາດ, ການບຳລຸງຮັກສາ.

**ບົດບາດ** - ຕຳແໜ່ງ (ໜ້າວຽກ) ທີ່ຮັກສາໂດຍຄົນຜູ້ໜຶ່ງ ແລະ ການພົວພັນຂອງຕຳແໜ່ງນັ້ນກັບຕຳແໜ່ງອື່ນໃນອົງການຈັດຕັ້ງ. ຕົວຢ່າງ: ປະທານບໍລິສັດ, ຫົວໜ້າພະແນກ, ຕົວແທນຂອງການຄຸ້ມຄອງສິ່ງແວດລ້ອມ, ຜູ້ຈັດການຝ່າຍຊື້, ຫົວໜ້າຝ່າຍບຳລຸງຮັກສາ.

**ຄວາມຮັບຜິດຊອບ** - ວຽກມອບໝາຍ ແລະ ພາລະຂອງຄົນຢູ່ໃນບົດບາດນັ້ນ. ຕົວຢ່າງ: ແຜນວາດ ແລະ ການນຳພາກວດສອບສິ່ງແວດລ້ອມ; ລາຍງານຕາມຜົນຂອງສຳຫຼວດຕໍ່ລັດຖະບານ; ດູແລທີມງານທີ່ຮັບຜິດຊອບກ່ຽວກັບພາວະສຸກເສີນ; ຮັບປະກັນການປ້ອງກັນປົກກະຕິໃນການບຳລຸງຮັກສາ ແມ່ນຖືກດຳເນີນການດ້ວຍເຄື່ອງມື.

**ອຳນາດ** - ກຳລັງ ແລະ ອິດທິພົນ ຂອງຄົນທີ່ມີຜົນຈາກ ບົດບາດພິເສດ. ອຳນາດ ຍັງເກີດຂື້ນໄດ້ຈາກນິໃສ ແລະ ການປະພຶດຂອງຄົນ. ຕົວຢ່າງ: ອຳນາດເພື່ອຕ້ອງການເຖິງການລາຍງານກ່ຽວກັບການສະແດງອອກທາງດ້ານສິ່ງແວດລ້ອມ; ອຳນາດເພື່ອຊີ້ນຳບຸກຄົນເພື່ອເກັບຕົວຢ່າງ ຫຼື ນຳພາການວິໄຈ; ອຳນາດເພື່ອປະຕິບັດວິໄນລູກຈ້າງໃນການປະພຶດທີ່ບໍ່ເໝາະສົມ.

## ຂໍ້ກຳນົດ ISO 14001 ຂໍ້ທີ 4.4.1 ໄດ້ອະທິບາຍວ່າ:

ຂໍ້ກຳນົດ 4.4.1 ຂອງ ISO 14001 ຊີ້ບອກວ່າອົງກອນຕ້ອງ "ກຳນົດ, ປະກອບ ແລະ ປະຊາສຳພັນ" ບົດບາດ, ຄວາມຮັບຜິດຊອບ ແລະ ອຳນາດຢູ່ໃນ EMS. ສຳນວນນີ້ມີຄວາມໝາຍຄືແນວໃດ?:

**ກຳນົດ** - ອົງກອນໄດ້ເນັ້ນໜັກໜ້າທີ່ ແລະ ພັນລະນາເຖິງຄວາມຮັບຜິດຊອບອັນຈຳເປັນ ເພື່ອການວາງແຜນ, ການສົ່ງເສີມ ແລະ ການບຳລຸງຮັກສາທຸກພາກສ່ວນຂອງ EMS ຢ່າງມີປະສິດທິພາບ.

**ເອກະສານ** - ລາຍລະອຽດຂອງບັນດາບົດບາດ, ຄວາມຮັບຜິດຊອບ, ແລະ ອຳນາດ ໄດ້ຖືກຂຽນລົງ, ເຊັ່ນວ່າໃນລາຍລະອຽດຂອງໜ້າວຽກ, ແຜນພາບຂອງອົງກອນ, ຂັ້ນຕອນໃນການປະຕິບັດງານ, ບັນທຶກ, ແຈ້ງການ.

**ປະຊາສຳພັນ** - ທຸກໆຄົນໄດ້ຮັບຮູ້ ແລະ ເຂົ້າໃຈບັນດາບົດບາດ, ຄວາມຮັບຜິດຊອບ ແລະ ອຳນາດ - ສິ່ງເຫຼົ່ານັ້ນໄດ້ກ່ຽວຂ້ອງໂດຍກົງກັບເຂົາເຈົ້າ ແລະ ຜູ້ອື່ນໆ ທີ່ມີຄວາມຢາກຮູ້ກ່ຽວກັບບັນດາໜ້າທີ່ຂອງ EMS ເປັນຄືແນວໃດ ເຊັ່ນ ແຕ່ລະຄົນຢູ່ໃນອົງກອນ.

ເປັນຫຍັງບັນຫານີ້ຈຶ່ງມີຄວາມສຳຄັນ? EMS ທັງໝົດແມ່ນກ່ຽວກັບປະຊາຊົນ, ແລະ ບັນດາບົດບາດ ແລະ ຄວາມຮັບຜິດຊອບຂອງປະຊາຊົນ. EMS ແມ່ນສ່ວນບຸກຄົນ, ການເຮັດວຽກເປັນສ່ວນໜຶ່ງຂອງທີມ ງານ, ເຊິ່ງພວກເຂົາເປັນຜູ້ເຮັດໃຫ້ EMS ມີການເຄື່ອນໄຫວ ແລະ ມີການດຳເນີນການ.

ປະຊາຊົນຈະເຮັດວຽກໄດ້ດີເມື່ອພວກເຂົາມີ:

- ເປົ້າໝາຍ ແລະ ຄວາມຮັບຜິດຊອບທີ່ໄດ້ຖືກກຳນົດຢ່າງຈະແຈ້ງ,
- ການພົວພັນລາຍງານ ແລະ ປະຊາສຳສຳພັນ ຕໍ່ຂັ້ນເທິງ, ຂັ້ນລຸ່ມ ແລະ ສາຍຂວາງໃນການແຜນວາດອົງກອນ ຈະແຈ້ງ, ແລະ

- ສິດໃນຊັບພະຍາກອນ ແລະ ການຕອບສະໜອງທາງດ້ານເວລາ, ອຸປະກອນ, ງົບປະມານ ແລະ ເພື່ອນຮ່ວມງານ.

## *ຄວາມຮັບຮັບຜິດຊອບໃນການຄຸ້ມຄອງ*

ການຄຸ້ມຄອງສູງສຸດມີຄວາມຮັບຜິດຊອບເພື່ອ:

- ກຳນົດນະໂຍບາຍກ່ຽວກັບສະພາບແວດລ້ອມສຳລັບອົງກອນ
- ນຳພາໂດຍການເປັນແບບຢ່າງໃນການປະຕິບັດເພື່ອການປັບປຸງ, ການປ້ອງກັນມົນລະພິດຢ່າງຕໍ່ເນື່ອງ, ແລະ ໄປຕາມກົດໝາຍ ແລະ ກົດລະບຽບກ່ຽວກັບສະພາບແວດລ້ອມທີ່ສຳພັນກັນ
- ມີອຳນາດໃນການຕອບສະໜອງຊັບພະຍາກອນເພື່ອສິ່ງເສີມ ແລະ ບຳລຸງຮັກສາ EMS
- ຕອບແທນການສະແດງອອກທີ່ດີໃນ EMS
- ນຳພາການທົບທວນກ່ຽວກັບການຄຸ້ມຄອງຂອງ EMS ຢ່າງປົກກະຕິ
- ປະສານສົມທົບບັນດາຫຼັກການ ແລະ ພາກປະຕິບັດກ່ຽວກັບການຄຸ້ມຄອງສະພາບແວດລ້ອມເຂົ້າໃນວັດທະນະທຳຂອງອົງກອນ

## ຊັບພະຍາກອນ

ຄຳເວົ້າທີ່ຈົບງາມ ແລະ ຄວາມເອົາໃຈໃສ່ທີ່ດີຍັງບໍ່ທັນພຽງພໍເພື່ອບັນລຸຂີດຄວາມສາມາດຂອງ EMS. ການຄຸ້ມຄອງຕ້ອງມີອຳນາດ ແລະ ຮັບປະກັນຄວາມຄວາມອາດສາມາດໃນການຕອບສະໜອງຊັບພະຍາກອນບຸກຄົນເຂົ້າໃນໜ້າວຽກ ແລະ ບຳລຸງຮັກສາຕາມຂັ້ນຕອນທີ່ຈຳເປັນ. ຊັບພະຍາກອນປະກອບດ້ວຍ:

- ປະຊາຊົນທີ່ມີການເຝິກງານຢ່າງຖືກຕ້ອງ, ມີປະສົບການ, ທັກສະ ແລະ ຄວາມສາມາດ ສະແດງອອກຢູ່ໃນຄວາມຮັບຜິດຊອບ ແລະ ໜ້າວຽກຢ່າງມີປະສິດທິຜົນ ແລະ ມີປະສິດທິພາບ
- ເວລາເພື່ອວາງແຜນ, ສົ່ງເສີມ ແລະ ປະຕິບັດ EMS, ນອກນັ້ນກໍຢູ່ໃນເວລາເຮັດວຽກ ແລະ ຄວາມຮັບຜິດຊອບປົກກະຕິ ຖ້າມີຄວາມຈຳເປັນ
- ສະໜັບສະໜູນດ້ານການເງິນທີ່ເໝາະສົມ - ການຈັດສັນງົບປະມານ - ເພື່ອຄວາມອາດສາມາດຂອງໂຄງການ, ການປັບປຸງຢູ່ໃນບັນດາຂັ້ນຕອນຕ່າງໆ, ການເຝິກອົບຮົມ, ເພື່ອບັນລຸແຜນການທີ່ວາງໄວ້
- ເຄື່ອງມື - ອຸປະກອນ ແລະ ບັນດາສິ່ງອຳນວຍຄວາມສະດວກເພື່ອບັນລຸຈຸດປະສົງແລະເປົ້າໝາຍ, ແລະ ເພື່ອບຳລຸງຮັກສາEMS

## ການຄຸ້ມຄອງສິ່ງແວດລ້ອມ

> **ISO 14001 ຂໍ້ທີ 4.4.1 ວ່າດ້ວຍໂຄງສ້າງ ແລະ ຄວາມຮັບຜິດຊອບເວົ້າວ່າ:**
>
> ບັນດາບົດບາດ, ຄວາມຮັບຜິດຊອບ ແລະ ອຳນາດຈະຖືກກຳນົດ, ບັນທຶກ ແລະ ປະຊາສຳພັນເພື່ອເຮັດໃຫ້ການຄຸ້ມຄອງທີ່ມີປະສິດທິພາບງ່າຍດາຍຂຶ້ນ.
>
> ການຄຸ້ມຄອງຈະສະໜອງຊັບພະຍາກອນທີ່ຈຳເປັນເພື່ອການສົ່ງເສີມແລະຄວບຄຸມລະບົບຄຸ້ມຄອງສິ່ງແວດລ້ອມ. ບັນດາຊັບພະຍາກອນປະກອບດ້ວຍຊັບພະຍາກອນມະນຸດ, ທັກສະທາງດ້ານວິຊາການ, ເຕັກໂນໂລຊີ ແລະ ຊັບພະຍາກອນທາງດ້ານການເງິນ.
>
> ອົງກອນຈະແຕ່ງຕັ້ງບັນດາຜູ້ຕາງໜ້າການຄຸ້ມຄອງສະເພາະດ້ານ ເຊິ່ງບໍ່ມີຄວາມຮັບຜິດຊອບຕໍາ່ແໜ່ງງານອື່ນ, ຈະໄດ້ກຳນົດບັນດາບົດບາດ, ຄວາມຮັບຜິດຊອບ ແລະ ອຳນາດສຳລັບ:
>
> (a) ຮັບປະກັນຄວາມຕ້ອງການຂອງ EMS –ໃຫ້ຖືກສ້າງຕັ້ງຂຶ້ນ, ສົ່ງເສີມ, ແລະ ບຳລຸງຮັກ ສາໂດຍສອດຄ່ອງກັບມາດຕະຖານສາກົນນີ້
>
> (b) ລາຍງານຂີດຄວາມສາມາດຂອງ EMS ຕໍ່ການຄຸ້ມຄອງສູງສຸດ ເພື່ອທົບທວນ ແລະ ເປັນພື້ນຖານສຳລັບການປັບປຸງຂອງ EMS.

## *ຄວາມຮັບຜິດຊອບຂອງຕົວແທນລະບົບຄຸ້ມຄອງສິ່ງແວດລ້ອມ*

ແຕ່ລະອົງກອນທີ່ໄດ້ສົ່ງເສີມ EMS ໄປສູ່ ບັນດາລາຍລະອຽດຂອງ ISO 14001 ຕ້ອງແຕ່ງຕັ້ງ ໜຶ່ງ ຫຼື ຫຼາຍ ຕົວແທນລະບົບການຄຸ້ມຄອງສິ່ງແວດລ້ອມ (EMR), ເຊິ່ງໜ້າວຽກຂອງບັນດາຕົວແທນດັ່ງກ່າວ

ພາຍໃຕ້ຊັບພະຍາກອນ ແລະ ການຊ່ວຍເຫຼືອຈາກພາກສ່ວນອື່ນໃນອົງກອນ, ແມ່ນເພື່ອ:

- ຕອບສະໜອງຄໍາແນະນໍາ ແລະ ທິດທາງ ເພື່ອອໍານວຍຄວາມສະດວກຕໍ່ການຄຸ້ມຄອງໃນການວາງແຜນການ, ການສົ່ງເສີມ, ການບໍາລຸງຮັກສາ, ແລະ ການປັບປຸງ EMS
- ບັນຊາຊີດຄວາມສາມາດ ແລະ ຄວາມກ້າວໜ້າຢູ່ໃນ EMS
- ຊີ້ບອກບັນຫາໃນ EMS ແລະ ດໍາເນີນການແກ້ໄຂ ແລະ ປ້ອງກັນ ຖ້າວ່າຈໍາເປັນ
- ລາຍງານຄວາມກ້າວໜ້າ ແລະ ບັນຫາຢູ່ໃນ EMS ຕໍ່ການຄຸ້ມຄອງສູງສຸດຢ່າງເປັນປົກກະຕິ
- ແລກປ່ຽນຄໍາເຫັນໃນ EMS ຕໍ່ຜູ້ບໍລິຫານສູງສຸດ.

> **ສ່ວນປະກອບ EMS ທີ່ມີປະສິດທິພາບ**
>
> ວິໄສທັດຈະແຈ້ງ ແລະ ແຜນການໄດ້ຖືກປະຊາສໍາພັນຢ່າງລະອຽດ
>
> ປະຊາຊົນ, ບັນດາຄວາມຮັບຜິດຊອບ, ຊັບພະຍາກອນ, ການນໍາພາ ແລະ ໂຄງສ້າງ ໄດ້ຖືກວາງອອກຢ່າງຄົບຖ້ວນ
>
> ການນໍາພາຢ່າງເຂັ້ມແຂງຈາກການຄຸ້ມຄອງສູງສຸດ ແລະ ຕົວແທນການຄຸ້ມຄອງກ່ຽວກັບສິ່ງແວດລ້ອມ
>
> ກະຈາຍການນໍາພາ ແລະ ຄວາມຮັບຜິດຊອບຜ່ານໂຄງສ້າງອົງກອນ ເຊັ່ນວ່າທຸກໆຄົນໃນອົງກອນ ໄດ້ເພີ້ມທະວີບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໃນ EMS

### *ບັນດາຄວາມສາມາດ, ທັກສະ ແລະ ຄຸນສົມບັດຂອງ EMR*

ມັນໄດ້ລວມເອົາຄວາມສາມາດ, ຄວາມຮູ້ - ຄວາມຊໍານານ, ບຸກຄະລິກລັກສະນະ ເພື່ອກາຍເປັນ EMR ທີ່ມີປະສິດທິພາບ. ບຸກຄົນທີ່ຖືກເລືອກຕ້ອງ:

- ມີຄວາມຮູ້ໃນວຽກງານກ່ຽວກັບສິ່ງແວດລ້ອມເວົ້າລວມ, ເວົ້າສະເພາະຢູ່ໃນອົງກອນ
- ມີຄວາມສາມາດໃນການປັບປຸງສິ່ງແວດລ້ອມ
- ມີຄວາມເຄົາລົບ ແລະ ຊື່ສັດ ທັງພາຍໃນ ແລະ ພາຍນອກອົງກອນ
- ມີວິໄສທັດ, ມີຄວາມນິ້ມນວນ, ມີຄວາມໜັກແໜ້ນ, ມີພະລັງ, ມີອໍານາດ, ມີຄວາມສາມາດໃນການຈັດຕັ້ງອົງກອນ ແລະ ມີການກະຕຸກຊຸກຍູ້ (ເຊັ່ນວ່າ ຕົນເອງ ແລະ ຜູ້ອື່ນ)

## ສະຫຼຸບຫຍໍ້ຈຸດສໍາຄັນ

- ທຸກໆຄົນໃນອົງກອນມີບົດບາດສໍາຄັນເພື່ອດໍາເນີນການ ແລະ ມີ ຄວາມຮັບຜິດຊອບເພື່ອສະໜອງຕອບຕາມແຜນການ, ການສົ່ງເສີມ, ການບໍາລຸງຮັກ ສາ, ແລະ ການປັບປຸງ EMS.
- ບັນດາບົດບາດ, ຄວາມຮັບຜິດຊອບ, ອໍານາດ, ແລະ ບັນດາໂຄງສ້າງການລາຍງານຕ້ອງໄດ້ຖືກກໍານົດຢ່າງຈະແຈ້ງ, ຖືກປະຊາສໍາພັນ ແລະ ຖືກທໍາຄວາມເຂົ້າໃຈ.
- ການຄຸ້ມຄອງຕ້ອງນໍາໄປສູ່ແບບຢ່າງ, ແລະ ຊັບພະຍາກອນຢ່າງພຽງພໍໃນດ້ານບຸກຄະລະກອນທີ່ມີຄຸນນະພາບ, ເວລາ, ເງິນ, ແລະ ອຸປະກອນ
- EMR ແມ່ນສູນລວມຂອງ EMS , ແລະ ຕ້ອງມີອໍານາດທີ່ເໝາະສົມ, ປະສົບການ, ຄວາມຮູ້, ຄວາມເຄົາລົບນັບຖື, ເວລາສ່ວນຕົວ, ແລະ ທັກສະໃນການຄຸ້ມຄອງ, ຄວາມສາມາດໃນການປະຊາສໍາພັນ ແລະ ບຸກຄະລິກ ເພື່ອຊີ້ນໍາ, ນໍາພາ, ແລະ ຊຸກຍູ້ຜູ້ອື່ນໃນອົງກອນ.
- EMR ແມ່ນຜູ້ຕາງໜ້າການຄຸ້ມຄອງສູງສຸດໃນການ ປະຕິບັດ ງານໃນປະຈຸບັນຂອງ EMS , ແລະ ຜູ້ຕາງໜ້າຂອງບັນດາຜູ້ບໍລິຫານການປະຕິບັດການທັງໝົດ, ຜູ້ຊີ້ນໍາ, ແລະ ບັນດາລູກຈ້າງຕໍ່ການຄຸ້ມຄອງສູງສຸດ.